

# ຄິດໃຫ້ດີແລ້ວຈິ່ງປູກ

## ອຸປະກອນການສົ່ງເສີມ ສຳລັບຊາວກະສິກອນຂະໜາດນ້ອຍທີ່ຈະປູກຢາງພາລາ

### 1. ເປັນຫຍັງຈຶ່ງຜະລິດອຸປະກອນສົ່ງເສີມ ສຳລັບຊາວກະສິກອນຂະໜາດນ້ອຍທີ່ຈະປູກຢາງພາລາ?

ຕໍ່ກັບສະພາບການໃນປະຈຸບັນທີ່ການປູກຢາງພາລາກຳລັງເປັນທີ່ນິຍົມໃນ ສ.ປ.ປ ລາວ. ນັກວິຊາການທັງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຊາວກະສິກອນເອງ ເຫັນວ່າ ສ່ວນຫລາຍການຕັດສິນໃຈປູກຢາງພາລາແມ່ນຍັງບໍ່ທັນໄດ້ຮັບການຄົ້ນຄວ້າພິຈາລະນາຮອບດ້ານເທື່ອ. ດັ່ງນັ້ນຈຶ່ງເຮັດໃຫ້ການປູກຢາງພາລາຍັງບໍ່ສາມາດປະກອບສ່ວນເຂົ້າໃນການຫລຸດຜ່ອນຄວາມທຸກຍາກ, ຢຸດຕິການຖາງປ່າເຮັດໄຮ່ ແລະ ຟື້ນຟູປ່າໄມ້ໄດ້ເທົ່າທີ່ຄວນ.

ອຸປະກອນການສົ່ງເສີມນີ້ແມ່ນໄດ້ຖືກສ້າງຂຶ້ນເພື່ອສະໜອງຄວາມຮູ້ດ້ານການ ປູກຢາງພາລາໃນ ສ.ປ.ປ ລາວ. ຈຸດປະສົງຂອງເຄື່ອງມືດັ່ງກ່າວບໍ່ແມ່ນແນໃສ່ສົ່ງເສີມການປູກຢາງພາລາ ແຕ່ຫາກຢາກຊ່ວຍຊາວກະສິກອນ ແລະ ນັກສົ່ງເສີມໃນການຕັດສິນໃຈ ແລະ ໃຫ້ຄວາມຮູ້ທີ່ຖືກຕ້ອງໃນການປູກ.

ອຸປະກອນນີ້ແມ່ນໄດ້ຖືກອອກແບບຂຶ້ນສຳລັບ 7 ແຂວງພາກເໜືອ ທີ່ມີການຜະລິດຂະໜາດນ້ອຍຢ່າງຫລວງຫລາຍ. ແຕ່ຢ່າງໃດກໍ່ຕາມ ອຸປະກອນດັ່ງກ່າວກໍ່ສາມາດນຳໄປໃຊ້ໃນຂົງເຂດ ອື່ນໆໄດ້ ເຊັ່ນດຽວກັນ.

*ອຸປະກອນດັ່ງກ່າວຖືກສ້າງຂຶ້ນດ້ວຍວິທີໃດ?*

*ອຸປະກອນດັ່ງກ່າວແມ່ນຖືກສ້າງຂຶ້ນໂດຍວິຊາການປະຈຳ NAFRI ແລະ NAFES ໂດຍຮ່ວມມືກັບພະແນກກະສິກຳ ແລະ ປ່າໄມ້ ແຂວງຫລວງນ້ຳທາ. ໂດຍໄດ້ນຳໃຊ້ຫລັກການການຜະລິດອຸປະກອນແບບຄົບຊຸດ ເຊິ່ງຊາວກະສິກອນ ແລະ ນັກສົ່ງເສີມເອງມີສ່ວນຮ່ວມເຂົ້າໃນການອອກແບບ ແລະ ທົດສອບ. ນອກຈາກນັ້ນຍັງຈະມີການຕິດຕາມການນຳໃຊ້ ແລະ ດັດປັບຄືນໃໝ່ ຫລື ຜະລິດອຸປະກອນເພີ່ມເຕີມໃນພາຍຫລັງ ຖ້າຫາກມີຄວາມຕ້ອງການຕົວຈິງ.*

### 2. ໄດ້ຜະລິດອຸປະກອນຫຍັງແດ່?

## ລາຍການໂຄສະນາໃນວິທະຍຸ

ວິທະຍຸແມ່ນກົນໄກການສື່ສານທີ່ເປັນທີ່ນິຍົມທີ່ສຸດໃນກຸ່ມຊາວກະສິກອນ. ພວກເຮົາໄດ້ຜະລິດໂຄສະນາ 3 ເລື່ອງຂຶ້ນ (ແຕ່ລະເລື່ອງມີຄວາມຍາວປະມານ 1 ນາທີ) ແນໃສ່ສະໜອງຂໍ້ມູນໂດຍພື້ນຖານທີ່ສຸດໃນການປູກຢາງພາລາເຊັ່ນ:

1. ຈຸດດີ ແລະ ຈຸດອ່ອນຂອງຢາງພາລາ
2. ຄວາມສ່ຽງໃນການປູກຢາງພາລາ
3. ທາງເລືອກໃໝ່ທີ່ບໍ່ແມ່ນການປູກຢາງພາລາ

ລາຍການໂຄສະນາທັງ 3 ເລື່ອງ ແມ່ນແນໃສ່ເຕືອນຊາວກະສິກອນ ໃຫ້ຄິດຢ່າງລະອຽດຖີ່ຖ້ວນ ກ່ອນຕັດສິນໃຈປູກ. ຊຶ່ງສ້າງເປັນ 3 ພາສາຄື: ພາສາລາວ, ຂະມຸ ແລະ ມົ້ງ ແຜນຈະອອກອາກາດໂດຍສະຖານີວິທະຍຸແຫ່ງຊາດ (ເດືອນກຸມພາ ຫາ ເດືອນເມສາ ປີ 2008). ພ້ອມກັນນັ້ນ ຍັງຈະຖືກສົ່ງໃຫ້ພະແນກຖະແຫລງຂ່າວ ແລະ ວັດທະນາທຳແຂວງທົ່ວປະເທດ. ນອກນັ້ນ ຍັງສາມາດນຳໄປກະຈາຍຜ່ານລະບົບໄທລະໄຂ່ງຂັ້ນບ້ານ ຫລື ນຳໃຊ້ໃນການຝຶກອົບຮົມໂດຍອົງການ NGOs ຕ່າງໆ.

## ແຜ່ນພັບ

ຊາວກະສິກອນຈຳນວນຫລວງຫລາຍປູກຢາງພາລາຍ້ອນເຫັນຄົນອື່ນປູກ ຫລື ຍ້ອນມີບໍລິສັດມາສົ່ງເສີມໃຫ້ປູກ ເຊິ່ງຍັງບໍ່ທັນຮູ້ໄດ້ຂໍ້ມູນຂ່າວສານຢ່າງລະອຽດຖີ່ຖ້ວນ. ແຜ່ນພັບດັ່ງກ່າວສະໜອງຂໍ້ມູນແບບສັງລວມກ່ຽວກັບຈຸດດີ ແລະ ຈຸດອ່ອນ, ຂໍ້ມູນເງື່ອນໄຂດ້ານສັງຄົມ, ສິ່ງແວດລ້ອມ ແລະ ເສດຖະກິດຂອງການປູກຢາງພາລາ ແລະ ທາງເລືອກໃໝ່ທີ່ບໍ່ແມ່ນການປູກຢາງພາລາໃນກໍລະນີທີ່ຊາວກະສິກອນ ບໍ່ມີເງື່ອນໄຂເໝາະສົມ.

ແຜ່ນພັບແມ່ນຖືກສ້າງຂຶ້ນເພື່ອໃຫ້ນັກສົ່ງເສີມ ແລະ ນັກພັດທະນານຳໃຊ້ເຂົ້າໃນວຽກງານການພັດທະນາຊາວກະສິກອນ ແລະ ກຸ່ມຜະລິດ ເພາະວ່າຊາວກະສິກອນຈຳນວນໜຶ່ງບໍ່ສາມາດອ່ານອອກຂຽນເປັນ.

## ປຶ້ມຄູ່ມືການປູກຢາງພາລາ

ມາຮອດປະຈຸບັນແມ່ນຍັງບໍ່ທັນມີປຶ້ມຄູ່ມືການປູກ, ຄຸ້ມຄອງ ແລະ ກີດຢາງພາລາ ທີ່ເປັນພາສາລາວເທື່ອ. ເຊິ່ງຊາວກະສິກອນ ແລະ ນັກສົ່ງເສີມມີຄວາມຮຽກຮ້ອງຕ້ອງການສູງ.

ເປົ້າໝາຍແມ່ນແນໃສ່ສະໜອງຂໍ້ມູນໃຫ້ແກ່ນັກສົ່ງເສີມ, ນັກພັດທະນາຢູ່ໃນລະດັບຕ່າງໆ. ສາມາດນຳໃຊ້ເປັນເອກະສານອ້າງອີງໃນການຝຶກອົບຮົມ. ປຶ້ມຄູ່ມືນີ້ສ້າງຂຶ້ນໂດຍອີງໃສ່ປະສົບການປູກຢາງພາລາຕົວຈິງໃນ ສ.ປ.ປ ລາວ ແລະ ໃນບັນດາປະເທດອ້ອມຂ້າງ (ຈີນ ແລະ ໄທ).

## ຈະຕິດຕໍ່ເອົາອຸປະກອນດັ່ງກ່າວໄດ້ຢູ່ໃສ?

ອຸປະກອນທັງໝົດແມ່ນຈະມີຢູ່ໃນພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງທົ່ວປະເທດ. ຖ້າທ່ານສົນໃຈຢາກໄດ້ອຸປະກອນດັ່ງກ່າວກະລຸນາພົວພັນໄດ້ທີ່ຫ້ອງການດັ່ງກ່າວ ຫລື ພົວພັນໄດ້ທີ່:

**ພະແນກຄຸ້ມຄອງຂໍ້ມູນຂ່າວສານ**
ສະຖາບັນຄົ້ນຄວ້າວິທະຍາສາດ ແຫ່ງຊາດກະສິກຳ ແລະ ປ່າໄມ້, ຕູ້ໄປສະນີ 7170,
ນະຄອນຫລວງ, Tel: 021770089, Email: info@nafri.org.la

ຕົວຈິງໃນ ສ.ປ.ປ ລາວ ແລະ ໃນບັນດາປະເທດອ້ອມຂ້າງ (ຈີນ ແລະ ໄທ).